ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------nhw-------

ກະຊວງ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ

ເລກທີ 5910 /ຄຂປກ
ລົງວັນທີ່ 18/5/2005

# ແຈ້ງການ

ເຖິງ : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ທະບວງ, ບັນດາແຂວງ, ເຂດພິເສດ ແລະ ນະຄອນຫລວງວຽງຈັນ, ຕະຫລອດເຖິງອົງການຈັດຕັ້ງສາກົນ, ປະຊາຊົນລາວ ແລະ ຊາວຕ່າງປະເທດທຸກຖ້ອນໜ້າ ທີ່ ອາໄສຢູ່ໃນ ດິນແດນ ສປປ ລາວ.

ເລື້ອງ: ການສະກັດກັ້ນ ແລະ ການຫລຸດຜ່ອນອຸປະຕິເຫດ ທາງຖະໜົນ ໃນ ສປປ ລາວ.

- ອີງຕາມກົດໝາຍຂົນສົ່ງສະບັບເລກທີ່ 03- 97/ສພຊ, ລົງວັນທີ່ 12/4/1997.
- ອີງຕາມກົດໝາຍຈະລາຈອນສະບັບເລກທີ່ 02 / ສພຊ, ລົງວັນທີ່ 8/4/2000.
- ອີງຕາມແຜນຍຸດທະສາດ ແລະແຜນດຳເນີນງານ ຄວາມປອດໄພ ທາງຖະໜົນ ແຫ່ງ ສປປ ລາວ

ອີງຕາມຕົວເລກສະຖິຕິອຸປະຕິເຫດທົ່ວປະເທດ ເຫັນວ່າການເກີດອຸປະຕິເຫດ ທາງຖະໜົນ ນັບມື້ນັບເພີ້ມຂຶ້ນ ແລະ ສ້າງຄວາມເສຍຫາຍທັງຊີວິດ ແລະ ຊັບສິນຢ່າງຫລວງຫລາຍ. ອີງຕາມຕົວເລກລາຍງານອຸປະຕິເຫດ ປີ 2003 ມີການເກີດອຸປະຕິເຫດທັງໝົດ 5.177 ຄັ້ງ,ໃນນັ້ນ ມີຜູ້ບາດເຈັບ 6.699 ຄົນ ແລະ ມີຜູ້ເສັຍຊີວິດ 426 ຄົນ, ພາຫະນະເປ່ເພທັງໝົດ 6.954 ຄັນ.

ຕົວເລກປີ 2004 ເກີດອຸປະຕິເຫດທັງໝົດ 4.256 ຄັ້ງ, ມີຜູ້ບາດເຈັບທັງໝົດ 6.640 ຄົນ, ມີຜູ້ເສຍຊີວິດ 418 ຄົນ ແລະ ພາຫະນະເປ່ເພທັງໝົດ 7.694 ຄັນ, ຜົນເສຍຫາຍດັ່ງກ່າວ ຖ້າຄິດໄລ່ເປັນມູນຄ່າແຕ່ລະປີປະມານ13 ລ້ານດອນລາສະຫະລັດ ຊຶ່ງມູນຄ່າດັ່ງກ່າວ ມີຜົນກະທົບໂດຍກົງ ຕໍ່ການພັດທະນາເສດຖະກິດສັງຄົມ ຂອງ ສປປລາວ.

ສາເຫດຕົ້ນຕໍພາໃຫ້ເກີດອຸປະຕິເຫດ ແມ່ນຍ້ອນການຂັບຂີ່ລົດໄວເກີນກຳນົດ ແລະ ຂັບຂີ່ດ້ວຍຄວາມມືນເມົາ, ໂດຍສະເພາະ ລົດຈັກ ກວມເອົາ 70 % ຂອງການເກີດອຸປະຕິເຫດ, ໃນນັ້ນ 80% ຂອງຜູ້ທີ່ຖືກບາດເຈັບ ແລະ ເສຍຊີວິດ ແມ່ນບໍ່ໄດ້ໃສ່ໝວກກັນກະທົບ.

ເພື່ອເປັນການສະກັດກັ້ນ ແລະ ຫລຸດຜ່ອນການເສັຍຊີວິດ ຍ້ອນອຸປະຕິເຫດທາງຖະໜົນ ລົງເທື່ອລະກ້າວ ທັງເປັນການ ຮັກສາຊີວິດ ແລະ ຊັບສິນຂອງລັດ ແລະ ຂອງປະຊາຊົນ ບໍ່ໃຫ້ສູນເສຍຍ້ອນອຸປະຕິເຫດທາງຖະໜົນ.

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກແຈ້ງການ ດັ່ງນີ້ :

1. ໃຫ້ທຸກໆພາກສ່ວນ ຈົ່ງສຶກສາອົບຮົມ ໃຫ້ພະນັກງານ, ທະຫານ, ຕໍາຫລວດ ແລະ ພໍ່ແມ່ປະຊາຊົນ ທີ່ຢູ່ພາຍໃຕ້ ຄວາມຮັບຜິດຊອບຂອງຕົນໃຫ້ຮູ້ກົດລະບຽບຈະລາຈອນ, ມີສະຕິໃນການຂັບຂີ່, ຂັບຂີ່ຕາມຄວາມໄວ ທີ່ກໍານົດ ແລະບໍ່ຂັບລົດໃນເວລາມືອາການມືນເມົາ.
2. ຜູ້ຂັບຂີ່ລົດຈັກນັບທັງຜູ້ຊ້ອນທ້າຍ ຕ້ອງໃສ່ໝວກກັນກະທົບທຸກຄັ້ງໃນເວລາຂັບຂີ່, ແລະ ລົດຈັກທຸກ ຄັນຕ້ອງມີແຫ່ວນສ່ອງຫລັງທັງສອງເບື້ອງ.
3. ມອບໃຫ້ເຈົ້າໜ້າທີ່ຕໍາຫລວດຈະລາຈອນ ເປັນຜູ້ຈັດຕັ້ງ ລົງກວດກາຕົວຈິງ ຕາມແຈ້ງການ ສະບັບນີ້ ແລະ ໃຫ້ພະແນກ ຄຂປກ ປະຈໍາແຂວງ, ນະຄອນຫລວງ ແລະ ເຂດພິເສດ ລົງຕິດຕາມ, ກວດກາຊຸກຍູ້ ການຈັດຕັ້ງປະຕິບັດ ເພື່ອໃຫ້ໄດ້ຮັບຜົນດີ ແລ້ວລາຍງານການຈັດຕັ້ງປະຕິບັດ ໃຫ້ກະຊວງ ຄຂປກ ຊາບເປັນແຕ່ ລະງວດ.
4. ນັບແຕ່ມື້ອອກແຈ້ງການສະບັບນີ້ ເຖິງວັນທີ່ 30/07/2005 ໃຫ້ເຈົ້າໜ້າທີ່ ຕໍາຫລວດຈະລາຈອນ ກວດກາຜູ້ລະເມີດ ພ້ອມທັງສຶກສາອົບຮົມ ແລະຕັກເຕືອນ. ນັບແຕ່ວັນທີ່ 1/8/2005 ເປັນຕົ້ນໄປ ຖ້າຍັງມີຜູ້ລະເມີດໃຫ້ໃຊ້ມາດຕະການປັບໃໝຕາມລະບຽບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາກະຊວງ,ອົງການທຽບເທົ່າ ກະຊວງ,ທະບວງ, ບັນດາແຂວງ,ເຂດພິເສດ, ນະຄອນຫລວງ, ອົງການຈັດຕັ້ງສາກົນ ຕະຫລອດເຖິງພໍ່ແມ່ປະຊາຊົນລາວ ແລະ ຊາວຕ່າງປະເທດທີ່ອາໄສຢູ່ດິນແດນແຫ່ງ ສປປ ລາວ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການ

ບົວທອງ ວົງລໍຄໍາ